# ໂຮງຮຽນວັນອາທິດ

## ວັນອາທິດທີ 20 ພຶສຈິກາ 2016 (11- 20- 2016)

## ຜົນກະທົບທີ່ບໍ່ສາມາດຢັບຢັ້ງໄດ້

ແມ່ນຫຍັງທີ່ເຮັດໃຫ້ທ່ານຊື່ນຊົມທີ່ສຸດໃນຄວາມແຕກຕ່າງທາງວັທນະທັມ?

**ຈຸດສຳຄັນໃນບົດຮຽນ**: ຂ່າວປະເສີດເຣື່ອງພຣະເຢຊູສາມາດສົ່ງຜົນກະທົບຕໍ່ທຸກໆ ວັທນະທັມ.

**ພຣະຄັມພີຕອບສນອງຕໍ່ຊີວິດ**:

ຖ້າທ່ານເຄີຍໄປຢ້ຽມຢາມປະເທດອື່ນ, ທ່ານກໍຮູ້ວ່າຫລາຍສິ່ງມີຄວາມແຕກຕ່າງກັນ.

- ພວກເຮົາເຄີຍສອນວ່າມັນເປັນການຫຍາບຄາຍທີ່ແລບລີ້ນໃສ່ຄົນໃດຄົນນຶ່ງ, ແຕ່ນັ້ນເປັນການສະແດງທ່າທີທີ່ສຸພາບໃນປະເທດທິເບດ.
- ພວກເຮົາແກວ່ງຫົວເມື່ອພວກເຮົາໃຫ້ຄວາມໝາຍວ່າ " ບໍ່," ແລະເຮົາງຶກຫົວເມື່ອພວກເຮົາໃຫ້ຄວາມໝາຍວ່າ "ແມ່ນແລ້ວ" ໃນປະເທດອາລບາເນັຽ ທ່າທາງດັ່ງກ່າວນີ້ແມ່ນມີຄວາມໝາຍກົງກັນຂ້າມ.
- ພວກເຮົາມັກຊ໊ອສໝາກເຫຼັ່ນກັບທອດມັນຝຣັ່ງ, ຫຼືບາງເທື່ອກໍໃສ່ມັສຕາດໜ້ອຍນຶ່ງ. ແຕ່ຊາວດັດຊ໌ມັກໃສ່ນ້ຳຊ໊ອສເມໂຢເນສ.

ບາງສິ່ງຂ້າງເທິງນີ້ເຫັນວ່າມີອັນນຶ່ງດີກວ່າອັນອື່ນແມ່ນບໍ່? ບໍ່, ມັນພຽງແຕ່ມີຄວາມແຕກຕ່າງກັນ. ແມ່ນແຕ່ຄວາມຫຼາກຫຼາຍແລະຮູບແບບຂອງຄວາມພໍໃຈກໍຕ່າງກັນ. ຄວາມຈິງຢ່າງນຶ່ງທີ່ສຳຄັນແມ່ນລັກສະນະຂອງແຕ່ລະວັທນະທັມ: ຂ່າວປະເສີດຂອງພຣະເຢຊູຄຣິດ. ຂ່າວປະເສີດສາມາດປະກາດໄດ້ໃນທຸກໆວັທນະທັມ ແລະເຫັນຢູ່ໃນເວລານີ້.

ຂະນະທີ່ໂລກມີຄວາມຫລາກຫຼາຍເພີ້ມຂຶ້ນ ພວກເຮົາຈະປະສົບກັບຫລາຍວັທນະທັມ, ຫລາຍເຊື້ອຊາດ, ເບິ່ງໂລກໃນແງ່ມຸມທີ່ຕ່າງກັນ, ແລະຄວາມເພິ່ງພໍໃຈໃນການດຳເນີນຊີວິດປະຈຳວັນກໍຕ່າງກັນ. ເມື່ອພວກເຮົາພິຈາຣະນາເບິ່ງໃນພຣະທັມກິຈການ, ພວກເຮົາຈະເຫັນວ່ານັ້ນບໍ່ເປັນບັນຫາ; ແຕ່ມັນເປັນໂອກາດ. ການປະກາດຂ່າວປະເສີດຢ່າງບໍ່ຢຸດຢັ້ງສາມາດສົ່ງຜົນສະທ້ອນຕໍ່ທຸກວັທນະທັມສຳລັບພຣະເຢຊູຄຣິດ.

**ພຣະຄັມພີກ່າວວ່າຢ່າງໃດ?** ( ເບິ່ງຕາມຫົວຂໍ້ 1, 2 ແລະ 3 )

### <u>ສຶກສາພຣະຄັມພີ</u>

**1. <u>ກິຈການ 17:16-18</u>**:

*16 ຂະນະທີ່ໂປໂລຍັງລໍຖ້າຊີລາກັບຕີໂມທຽວຢູ່ກຸງອາແຖນນັ້ນ ທ່ານກໍມີຄວາມເດືອດຮ້ອນເຄືອງໃຈເພາະໄດ້ເຫັນເມືອງ*
*ນັ້ນເຕັມໄປດ້ວຍພຣະທຽມ. 17 ເຫດສັນນັ້ນທ່ານຈຶ່ງໄດ້ໂຕ້ຖຽງກັບພວກຢິວ ແລະຜູ້ທີ່ຢຳເກງພຣະເຈົ້າໃນໂຮງທັມ ແລະ*
*ກັບບຸກຄົນທີ່ພົບໃນບ່ອນປະຊຸມທຸກວັນ. 18 ມີນັກປາດລາງຄົນໃນພວກເອປີກູຣຽວແລະໃນພວກສະໂຕອີໂກໄດ້ມາພົບ*
*ທ່ານ ລາງຄົນກ່າວວ່າ, "ຄົນເກັບເລັມຄວາມຮູ້ຜູ້ນີ້ຢາກເວົ້າອັນໃດ" ລາງຄົນກ່າວວ່າ "ເໝືອນເປັນຜູ້ປະກາດພຣະຕ່າງ*
*ດ້າວ" ເພາະໂປໂລປະກາດຂ່າວປະເສີດເຣື່ອງພຣະເຢຊູແລະການຄືນມາຈາກຕາຍ.*

ກຸງອາແຖນເປັນສູນກາງຂອງຜູ້ມີສະຕິປັນຍາຂອງໂລກ, ເປັນສະຖານທີ່ຂາບໄຫວ້ພຣະທຽມແລະເຊື່ອແບບງົມງາຍອີກ. ແທ່ນບູຊາແລະຮູບປັ້ນພຣະຂອງຄົນກຣີກຕັ້ງຢູ່ທາງໜ້າເຮືອນທຸກເຮືອນ, ຢູ່ອ້ອມຮອບຕລາດແລະຕາມທາງສີ່ແຍກ. ພຽງແຕ່ໃນກຸງອາແຖນເທົ່ານັ້ນມີຮູບປັ້ນເຖິງ 3,000 ອັນ ແລະຢູ່ທົ່ວທຸກແຫ່ງມີ 30,000 ພຣະທຽມ. ນັກແຕ່ງນິຍາຍຊາວໂຣມຄົນນຶ່ງຊື່ ເພັດໂຕນີອັສ ອາບິດເຕີ, ຊຶ່ງມີຊີວິດຢູ່ໃນສມັຍນັ້ນ, ຂຽນໄວ້ວ່າ ໃນເມືອງນີ້ການຊອກຫາພຣະເຈົ້າກໍງ່າຍກວ່າຊອກຫາຜູ້ຊາຍ.

ການຂາບໄຫວ້ພຣະທຽມເຮັດໃຫ້ໂປໂລເດືອດຮ້ອນເຄືອງໃຈ, ແຕ່ເພິ່ນເລືອກທີ່ຈະເຮັດບາງສິ່ງບາງຢ່າງກ່ຽວກັບເຣື່ອງນີ້. ເພິ່ນໄດ້ເຂົ້າໄປໃນໂຮງທັມ, ຕາມຕລາດ, ແລະເລີ້ມຕົ້ນການສົນທະນາ. ໃນໂຮງທັມທ່ານພົບກັບຄົນທີ່ມີຄວາມຄິດດີມີປັນຍາຢູ່ສອງປະເພດ:

1. **ນັກປາດພວກເອປີກູຣຽວ ເຊື່ອວ່າເປົ້າໝາຍຂອງຊີວິດແມ່ນສແວງຫາຄວາມມ່ວນຊື່ນ** ແລະກຳຈັດສິ່ງທີ່ເຮັດໃຫ້ເສັຽໃຈ. ຖ້າພຣະເຈົ້າຊົງມີຢູ່ແທ້, ພຣະອົງຈະບໍ່ລົບກວນຊີວິດເຂົາເຈົ້າ. ນອກຈາກນີ້, ພວກເຂົາບໍ່ເຊື່ອວ່າມີຊີວິດຫຼັງຄວາມຕາຍ.
2. **ພວກສະໂຕອີໂກ** ເຊື່ອວ່າມີພຣະເຈົ້າຢູ່ທຸກທີ່ທຸກບ່ອນ, ເຊື່ອໃນກົດເກນສູງສຸດຂອງພຣະເຈົ້າທີ່ມີຢູ່ທົ່ວຈັກກະວານ. ພວກເຂົາເຊື່ອວ່າທາງທີ່ເປັນໄປໄດ້ເພື່ອເຮັດໃຫ້ຮູ້ເຖິງຄວາມສົມບູນແມ່ນການດຳເນີນຊີວິດດ້ວຍເຫດຜົນ. ພວກສະໂຕອີໂກເຊື່ອວ່າພວກເຂົາສາມາດກຳຈັດຄວາມທົນທຸກຜ່ານທາງສະຕິປັນຍາອັນດີເລີດ.

ທີ່ນີ້ແມ່ນສູນກາງວັທນະທັມແລະສະຕິປັນຍາຂອງອານາຈັກໂຣມ ເປັນສະຖານທີ່ ປະລາໂຕ, ໂຊກຣາຕີສ ແລະອາຣິສໂຕເຕີລ ຄັ້ງນຶ່ງເຄີຍສອນຢູ່ທີ່ນີ້, ແລະເປັນສະຖານທີ່ຂອງຜູ້ມີສະຕິປັນຍາມັກໂຕ້ຖຽງກັນ ໂປໂລໄດ້ເຂົ້າໄປສູ່ການສົນທະນາກັບນັກປາດຜູ້ທີ່ຢູ່ອີກໂລກນຶ່ງໃນຄວາມເຊື່ອຂອງເຂົາ. ເພື່ອຄວາມແນ່ໃຈ, ນັກປາດເຫຼົ່ານີ້ເຍາະເຍີ້ຍໂປໂລ, ເອີ້ນທ່ານວ່າ " ສະຕິປັນຍາ-ຈອມປອມ." ແຕ່ໂປໂລບໍ່ໄດ້ປົກປ້ອງຕົນເອງ.

ເມື່ອທ່ານຮູ້ຄວາມຈິງແລະເຫັນວ່າຄົນອື່ນຕ້ອງການຢາກໄດ້ຍິນ, ທ່ານພຽງແຕ່ມີສ່ວນຮ່ວມ, ບໍ່ວ່າແມ່ນຫຍັງຈະເກີດຂຶ້ນກໍຕາມ

ຈົ່ງຈື່ຈຳຄຳເວົ້າຂອງພຣະເຢຊູທີ່ວ່າ: "ບໍ່ຫ່ອນມີຜູ້ໃດເມື່ອໄຕ້ໂຄມແລ້ວເອົາບຸງມາກວບ ແຕ່ເຄີຍຕັ້ງໄວ້ເທິງຮອງຕີນໂຄມແລະມັນສ່ອງແຈ້ງໄປທົ່ວທຸກຄົນທີ່ຢູ່ໃນເຮືອນນັ້ນ. ເໝືອນຢ່າງນັ້ນແຫລະ ພວກທ່ານຈົ່ງສ່ອງແຈ້ງແກ່ຄົນທັງປວງເພື່ອວ່າ, ເມື່ອເຂົາເຫັນການດີທີ່ພວກທ່ານເຮັດເຂົາຈະໄດ້ສັຣເສີນພຣະບິດາຂອງພວກທ່ານຜູ້ຊົງສະຖິດຢູ່ໃນສວັນ. (ມັດທາຍ 5: 15-16 ).

## 2. <u>ກິຈການ 17:22-23:</u>

*[22]ຝ່າຍໂປໂລຈຶ່ງຢືນຂຶ້ນຖ້າມກາງສະພາອາເຣໂອປາໂຄ ແລ້ວກ່າວວ່າ, "ທ່ານຊາວກຸງອາແຖນເອີຍ, ໃນທຸກສິ່ງທຸກປະການຂ້າພະເຈົ້າເຫັນວ່າພວກທ່ານເປັນຜູ້ປະຕິບັດພຣະຕ່າງໆຢ່າງເຄັ່ງຄັດ. [23]ເພາະວ່າເມື່ອຂ້າພະເຈົ້າຜ່ານມາສັງເກດເບິ່ງສິ່ງທັງປວງທີ່ພວກທ່ານນະມັສການ ກໍໄດ້ເຫັນແທ່ນອັນໜຶ່ງມີຄຳຈາລຶກໄວ້ວ່າ 'ແດ່ພຣະເຈົ້າທີ່ເຮົາບໍ່ຮູ້ຈັກ' ເຫດສັນນັ້ນພຣະທີ່ທ່ານທັງຫລາຍນະມັສການເມື່ອຍັງບໍ່ຮູ້ຈັກ ພຣະເຈົ້າອົງນັ້ນແຫລະ, ຂ້າພະເຈົ້າມາປະກາດແກ່ພວກທ່ານ.*

ເມື່ອພວກເຮົາພົບຜູ້ໃດຜູ້ນຶ່ງທີ່ແຕກຕ່າງຈາກພວກເຮົາ. ພວກເຮົາມີທາງເລືອກ ພວກເຮົາສາມາດມຸ້ງຄວາມສົນໃຈໄປທີ່ຄວາມແຕກຕ່າງແລະຢູ່ໄກຈາກລາວ, ຫຼືພວກເຮົາສາມາດຊອກຫາສິ່ງທີ່ເຮົາກັບລາວຄ້າຍຄືກັນແລະເຂົ້າຮ່ວມກັນ. ພວກເຮົາສາມາດສ້າງຮົ້ວກັ້ນຫຼືສ້າງຂົວໄຕ່ຫາກັນ. ໂປໂລເປັນຜູ້ສ້າງຂົວ.

ເມື່ອໂປໂລເວົ້າເຖິງພຣະເຢຊູ, ນັກປາດເອປີກູຣຽວແລະສະໂຕອີໂກໄດ້ກ່າວຫາທ່ານວ່າເປັນຄົນຄຸຍໂມ້ເປັນຜູ້ທີ່ບໍ່ຮູ້ຕົວເອງວ່າກຳລັງເວົ້າເຣື່ອງຫຍັງ. ແຕ່ອີກພວກນຶ່ງເກີດຄວາມສົນໃຈ. ພວກເຂົາຕ້ອງການທີ່ຈະໄດ້ຍິນຕື່ມອີກ. ດັ່ງນັ້ນ

ພວກເຂົາຈຶ່ງພາໂປໂລໄປຍັງສະພາອາເຣໂອປາໂຄ, ທີ່ສະພາຊາວອາແຖນແລະຈ້າຍພູຊຶ່ງເປັນສະຖານທີ່ຊຸມນຸມ, ເພື່ອຊຸມຊົນຈະໄດ້ຍິນເຣື່ອງດັ່ງກ່າວ.

ຜູ້ຟັງຂອງໂປໂລບໍ່ຮູ້ກ່ຽວກັບເຣື່ອງພຣະເຢຊູ, ຫຼືພວກເຂົາບໍ່ເຊື່ອໃນພຣະເຈົ້າອົງດຽວ. ໂປໂລບໍ່ແນ່ໃຈວ່າຈະເລີ້ມຈາກຈຸດໃດໃນການສົນທະນາ, ແຕ່ທ່ານພົບເຫັນອັນນຶ່ງ: ທີ່ພວກເຂົານະມັສການ, ພວກເຂົາໄດ້ນະມັສການສິ່ງຜິດ, ແຕ່ຢ່າງນ້ອຍເຂົາມີຄວາມຫິວກະຫາຍທາງດ້ານຝ່າຍວິນຍານ. ໂປໂລໃຊ້ຈິດວິນຍານຂອງເຂົາໃນການເຂົ້າຫາກັນ.

ຄຳຈາລຶກຂອງແທ່ນບູຊາ "ແດ່ພຣະເຈົ້າທີ່ບໍ່ຮູ້ຈັກ" ແມ່ນເຫັນໄດ້ຊັດເຈນຄວາມພະຍາຍາມຂອງຊາວອາແຖນແນ່ໃຈວ່າພວກເຂົາບໍ່ໄດ້ຕັ້ງໃຈລືມພຣະເຈົ້າອົງນຶ່ງໃນພຣະເຈົ້າຫລາຍໆ ອົງ. ໂປໂລໄດ້ນຳໃຊ້ການຍອມຮັບຂອງເຂົາວ່າອາດແມ່ນພຣະເຈົ້າອົງນຶ່ງທີ່ເຂົາຍັງບໍ່ທັນຮູ້ຈັກເໝືອນດັ່ງທີ່ໄດ້ແນະນຳເຂົາເຈົ້າໃນຕອນເລີ້ມຕົ້ນ " ພຣະເຈົ້າຜູ້ສ້າງໂລກແລະສັພທຸກສິ່ງທີ່ຢູ່ໃນໂລກ" (ຂໍ້ 24). ຕໍ່ຈາກນັ້ນ, ທ່ານໄດ້ປະກາດຄວາມຈິງເຣື່ອງຂອງພຣະເຈົ້າແລະແຜນຂອງພຣະອົງໃນການຊ່ວຍເຂົາເຈົ້າໃຫ້ພົ້ນ.

ດ້ວຍວ່າຫຼາຍສິ່ງຫຼາຍຢ່າງເກີດຂຶ້ນໃນອາເມຣິກາ, ໃນແຕ່ລະວັນພວກເຮົາທັງໝົດໄດ້ລູບບ່າກັບຄົນຜູ້ມີຄວາມແຕກຕ່າງຈາກພວກເຮົາ, ຄວາມແຕກຕ່າງທາງດ້ານພາສາ, ວັທນະທັມ, ສາສນາ, ເຊື້ອຊາດ, ຊົນຊັ້ນ ແລະທັສນະທາງດ້ານການເມືອງ, ລາງເທື່ອກໍຍາກທີ່ຈຸດທີ່ຄ້າຍຄືກັນໄດ້. ເຖິງປານນັ້ນ, ເມື່ອທ່ານເລີ້ມຊອກຫາຈຸດທີ່ຈະເຊື່ອມຕໍ່ຜູກພັນກັນ, ທ່ານກໍຈະພົບ. ຄວາມຮັກຂອງຄອບຄົວ, ຄວາມເຈັບປວດຂອງຜູ້ສູນເສັຽ, ສິ່ງທີ່ເຮັດໃນຍາມວ່າງແລະຄວາມສົນໃຈ, ອາຫານ, ວຽກງານ, ສຸຂພາບ ສິ່ງທັງໝົດເຫຼົ່ານີ້ພວກເຮົາຮ່ວມກັນໄດ້.

ສ້າງຈຸດທີ່ຈະເບິ່ງແລະຟັງເພື່ອເປັນຂົວຂ້າມຫາຄົນອື່ນ.

**3 <u>ກິຈການ 17:30-31:</u>**

*[30]ໃນສມັຍທີ່ມະນຸດຍັງໂງ່ບໍ່ຮູ້ຈັກພຣະເຈົ້າພຣະອົງກໍບໍ່ຊົງຖືໂທດ ແຕ່ບັດນີ້ພຣະອົງຊົງສັ່ງແກ່ມະນຸດທັງປວງໃນທົ່ວທຸກບ່ອນ ໃຫ້ຖິ້ມໃຈເກົ່າເອົາໃຈໃໝ່. [31]ເພາະວ່າພຣະອົງໄດ້ຊົງກຳນົດວັນໜຶ່ງໄວ້ ໃນວັນນັ້ນພຣະອົງຈະຊົງພິພາກສາໂລກຕາມຍຸດຕິທັມ ໂດຍມະນຸດຜູ້ໜຶ່ງຊຶ່ງພຣະອົງໄດ້ຊົງຕັ້ງໄວ້ ແລະພຣະເຈົ້າໄດ້ຊົງໂຜດໃຫ້ຄົນທັງປວງມີຄວາມແນ່ໃຈໃນເຣື່ອງນີ້ ໂດຍຊົງບັນດານໃຫ້ມະນຸດຜູ້ນັ້ນເປັນຄືນມາຈາກຕາຍ."*

ມັນເປັນການດີທີ່ໄປສະຖານທີ່ຢູ່ຜູ້ຄົນແລະເຂົາຮ່ວມໃນສິ່ງທີ່ເຂົາເຮັດ. ມັນເປັນການດີທີ່ຈະທັກທາຍແລະເລີ້ມສົນທະນາ. ແຕ່ບໍ່ໄດ້ສິ້ນສຸດຢູ່ທີ່ນັ້ນ. ຖ້າຢຸດຢູ່ທີ່ນັ້ນກໍຄືການຍ່າງອອກຈາກການແລ່ນແຂ່ງລະຍະໄກຊຶ່ງຍັງອີກບໍ່ໄກທີ່ຈະເຖິງເສັ້ນຊັຍ.

ໃນຊ່ວງເວລາທີ່ເອລີຊາຮັບໃຊ້ພຣະເຈົ້າ, ພວກອາຣາມຽນໄດ້ສູ້ຮົບກັບພວກອິສຣາເອນ. ເມືອງຊາມາເຣັຽຖືກຍຶດແລະຂາດແຄນອາຫານ( 2 ກະສັດ 6:8, 24-25 ). ມື້ນຶ່ງ, ພວກຂີ້ທູດສີ່ຄົນທີ່ອາສັຍຢູ່ນອກເມືອງເພາະພະຍາດຂອງພວກເຂົາ, ພວກເຂົາໄດ້ໄປຫາພວກອາຣາມຽນຫວັງວ່າຈະໄດ້ອາຫານ. ຕໍ່ຄວາມປະຫຼາດໃຈຂອງເຂົາ, ຄ້າຍຂອງພວກອາຣາມຽນເປັນຄ້າຍຮ້າງ. ໃນຕອນກາງຄືນ, ອົງພຣະຜູ້ເປັນເຈົ້າເຮັດໃຫ້ອາຣາມຽນຫລົບໜີ. ພວກເຂົາປະອາຫານ, ເຄື່ອງນຸ່ງ, ເງິນແລະຄຳໄວ້. ພວກຂີ້ທູດສີ່ຄົນພົ້ນຈາກຄວາມຫາຍະນະແລະຢູ່ໃນທີ່ນັ້ນເໝືອນເປັນແດນສວັນ.

ພວກຂີ້ທູດໄດ້ກິນແລະດື່ມແລະເອົາເຄື່ອງຂອງອອກໄປເຊື່ອງໄວ້( 2 ກະສັດ 7: 5-8) ແຕ່ພວກເຂົານຶກຂຶ້ນໄດ້ວ່າຍາດພີ່ນ້ອງຍັງອຶດຫິວຢູ່ໃນເມືອງ "ແລ້ວເຂົາເວົ້າຕໍ່ກັນວ່າ" ພວກເຮົາເຮັດບໍ່ຖືກແລ້ວ ມື້ນີ້ເປັນມື້ຂ່າວດີ ຖ້າເຮົາມິດຢູ່ແລະຄອຍຖ້າຈົນຕາເວັນຂຶ້ນໃນຍາມເຊົ້າໂທດຈະຕົກຢູ່ກັບເຮົາ ເພາະສະນັ້ນ ມາແມ ໃຫ້ເຮົາໄປບອກສຳນັກພຣະຣາຊວັງ" (ຂໍ້ 9 ).

ພວກເຮົາທັງໝົດທີ່ຮູ້ພຣະເຢຊູກໍຄືກັບຄົນຂີ້ທູດຜູ້ທີ່ພົບກັບຄວາມຫວັງ. ພວກເຮົາພົບກັບຄໍາຕອບໃນສ່ວນເລິກຂອງຄວາມຕ້ອງການຂອງເຮົາ, ແລະຍັງເປັນຄໍາຕອບຂອງຄວາມຕ້ອງການຂອງຄົນເຫລົ່ານັ້ນນໍາ " ທີ່ຢູ່ໃນເມືອງ" ຜູ້ທີ່ຍັງບໍ່ຮູ້ເທື່ອວ່າພຣະເຢຊູຄືພຣະຜູ້ໂຜດໃຫ້ພົ້ນ. ມື້ນີ້ແມ່ນມື້ທີ່ມີຂ່າວດີ! ຂ່າວປະເສີດດີໂພດບໍ່ຈື່ງບໍ່ແບ່ງປັນ.

ເມື່ອໂປໂລເວົ້າຢູ່ທີ່ອາເຣໂອປາໂຄ ເພິ່ນໃຊ້ຄໍາເວົ້າທີ່ຄຸ້ນເຄີຍກັບຜູ້ຟັງຂອງເພິ່ນ. ເພິ່ນອ້າງອີງເຖິງບົດກອນຂອງເຂົາເຈົ້າແລະເວົ້າພາສາຂອງເຂົາເຈົ້າ. ແຕ່ເພິ່ນຍັງເນັ້ນຢູ່ທີ່ຂ່າວປະເສີດ ຊາວອາແຖນມີບັນຫາທີ່ຈະຮັບພຣະເຈົ້າເປັນຜູ້ຊົງສ້າງແລະຜູ້ຕັດສິນແລະເຊື່ອໃນການເປັນຄືນມາຈາກຕາຍຂອງພຣະເຢຊູ, ແຕ່ໃນຈຸດນີ້ ໂປໂລບໍ່ໄດ້ປະນີປະນອມໃນເຣື່ອງຄວາມຈິງຂອງຂ່າວປະເສີດ.

ໂປໂລພົບເຂົາເຈົ້າຕາມທີ່ເຂົາເຈົ້າເຊື່ອ, ນໍາເອົາຄວາມຈິງເຣື່ອງຂອງພຣະເຢຊູເຂົ້າສູ່ການສົນທະນາ, ແລະຂ້າມຜ່ານເສັ້ນຊັຍໄປສູ່ການເວົ້າຂ່າວປະເສີດ. ສ່ວນທີ່ຍັງເຫລືອແມ່ນຂຶ້ນຢູ່ກັບພຣະເຈົ້າ.

## ນໍາໃຊ້ໃນຊີວິດ

**ພວກເຮົາມີຄວາມຈໍາເປັນທີ່ຕ້ອງນໍາເອົາຂ່າວປະເສີດອອກໄປສູ່ໂລກ, ແຕ່ຄົນປະເທດອື່ນກໍມາຫາເຮົາ, ເພາະສະນັ້ນ**:

- **ຮັບເອົາການສຶກສາ.** ຮຽນຮູ້ເຖິງຄວາມແຕກຕ່າງທາງດ້ານວັທນະທັມໃນຊຸມຊົນຂອງທ່ານ.ສົນທະນາກ່ຽວກັບປະເພນີ, ຮີດຄອງແລະຄວາມເຊື່ອຂອງເຂົາເຈົ້າ. ເຂົ້າຮ່ວມງານປະເພນີຫຼືເຂົ້າຮ່ວມການສະແດງ. ກາຍເປັນນັກສຶກສາຮຽນຮູ້ວັທນະທັມທີ່ແຕກຕ່າງ ໃນຄວາມພະຍາຍາມເພື່ອຈະເລີ້ມສົນທະນາ.
- **ຮັບເອົາຝ່າຍວິນຍານ.** ເອົາຕາມຕົວຢ່າງຂອງໂປໂລໂດຍການເຂົ້າຮ່ວມນະມັສການກັບຜູ້ທີ່ມີວັທນະທັມທີ່ແຕກຕ່າງ. ຊອກຫາຈຸດທີ່ຄ້າຍຄືກັນເພື່ອສ້າງຂົວໄຕ່ລະຫວ່າງວັທນະທັມແລະພຣະຄຣິດ.
- **ຮັບເອົາເປັນທາງການ.** ເວົ້າກັບຜູ້ມີຄວາມຮັບຜິດຊອບໃນຄຣິສຕະຈັກຂອງທ່ານເພື່ອຕັ້ງກຸ່ມອອກຮັບໃຊ້ໃນຊຸມຊົນທີ່ມີວັທນະທັມແຕກຕ່າງ.

ແມ່ນແລ້ວ, ໃນແຕ່ລະປະເທດແລະໃນແຕ່ລະວັທນະທັມມີຄວາມແຕກຕ່າງກັນ. ຄວາມແຕກຕ່າງເຫຼົ່ານັ້ນມີທັງດີແລະບໍ່ດີ, ເຖິງປານນັ້ນກໍຍັງເປັນໂອກາດທີ່ດີໃນການແບ່ງປັນຂ່າວດີເຣື່ອງພຣະເຢຊູ.

**ອຸປຖັມໂດຍລາວຊາວເທີນບັບຕິດສັມພັນ www.lsbf.org ແປໂດຍ VR.**